ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 1342 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 23 ມິຖຸນາ 2021

# ແຈ້ງການ

**ຮຽນ:** - ທ່ານ ຫົວໜ້າຫ້ອງການ ທະນາຄານ ແຫ່ງ ສປປ ລາວ;

- ບັນດາຂະແໜງລາຍຮັບ, ຄັງເງິນແຫ່ງຊາດ, ຫົວໜ່ວຍງົບປະມານ ຂັ້ນ ສູນກາງ ແລະ ທ້ອງຖິ່ນ;
- ພະແນກການເງິນແຂວງ-ນະຄອນຫຼວງ, ຫ້ອງການການເງິນເມືອງ-ນະຄອນ;
- ບັນດາຫົວໜ່ວຍທຸລະກິດ, ຜູ້ດຳເນີນທຸລະກິດ ແລະ ຜູ້ປະກອບການທຸກພາກສ່ວນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການມອບລາຍຮັບເຂົ້າງົບປະມານແຫ່ງລັດ ເປັນສະກຸນເງິນຕາຕ່າງປະເທດ ຜ່ານລະບົບທະນາຄານ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງການເງິນ ເຖິງ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 2082/ກງ, ລົງວັນທີ 30 ເມສາ 2021 ເລື່ອງສະເໜີອະນຸຍາດຮັບເງິນຕາຕ່າງປະເທດ (ສະກຸນເງິນ ໂດລາ ແລະ ບາດ) ຈາກການມອບພັນທະຂອງຫົວໜ່ວຍທຸລະກິດຕ່າງໆ ເຂົ້າບັນຊີເງິນຝາກງົບປະມານແຫ່ງລັດ ໂດຍກົງ;
- ອີງຕາມ ໜັງສືສະເໜີ ຂອງຄັງເງິນແຫ່ງຊາດ ສະບັບເລກທີ 2892 /ຄງຊ, ລົງວັນທີ 21 ມິຖຸນາ 2021.

ເພື່ອເປັນການຊຸກຍູ້, ສົ່ງເສີມ, ການນຳໃຊ້ເຄື່ອງທັນສະໄໝ ເຂົ້າໃນການຄຸ້ມຄອງເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ມີຄວາມໂປ່ງໃສ, ຖືກຕ້ອງ ທັນຕາມກຳນົດເວລາ ແລະ ຮັບປະກັນການມອບລາຍຮັບເຂົ້າງົບປະມານ ເປັນສະກຸນເງິນຕາຕ່າງປະເທດ ລວມສູນຜ່ານລະບົບທະນາຄານ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບດັ່ງນີ້:

1. ໃຫ້ເລີ່ມຈັດຕັ້ງປະຕິບັດການມອບລາຍຮັບເຂົ້າບັນຊີເງິນຝາກງົບປະມານ ເປັນເງິນສະກຸນເງິນຕາຕ່າງປະເທດ (ສະກຸນເງິນ ໂດລາ ແລະ ບາດ)ຜ່ານລະບົບທະນາຄານ ນັບແຕ່ວັນທີ 01 ກໍລະກົດ 2021 ເປັນຕົ້ນໄປ ແລະ ນຳໃຊ້ໃບຮັບເງິນຂອງຄັງເງິນແຫ່ງຊາດ ເປັນເອກະສານຢັ້ງຢືນການມອບພັນທະ ໃຫ້ຜູ້ມອບພັນທະເຂົ້າງົບປະມານແຫ່ງລັດ ຜ່ານລະບົບທະນາຄານ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ສະເໜີຫ້ອງການທະນາຄານ ແຫ່ງ ສປປ ລາວ ພິຈາລະນາອອກແຈ້ງການເຖິງບັນດາ ທະນາຄານທຸລະກິດຂອງລັດ, ທະນາຄານທຸລະກິດ ກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດການມອບລາຍຮັບ ເປັນເງິນສະກຸນເງິນຕາຕ່າງປະເທດ (ສະກຸນເງິນ ໂດລາ ແລະ ບາດ) ເຂົ້າບັນຊີເງິນຝາກງົບປະມານແຫ່ງລັດ ຜ່ານລະບົບທະນາຄານ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ;

3. ມອບໃຫ້ຄັງເງິນແຫ່ງຊາດ ເປັນເຈົ້າການປະສານສົມທົບກັບກົມສ່ວຍສາອາກອນ, ກົມພາສີ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດການມອບລາຍຮັບເຂົ້າບັນຊີເງິນຝາກງົບປະມານ ເປັນເງິນສະກຸນເງິນຕາຕ່າງປະເທດ (ສະກຸນເງິນ ໂດລາ ແລະ ບາດ) ຜ່ານລະບົບທະນາຄານ ໃຫ້ຖືກຕ້ອງ ແລະ ທັນຕາມກຳນົດເວລາ;
4. ບັນດາກົມລາຍຮັບ, ຫ້ອງການທະນາຄານ ແຫ່ງ ສປປ ລາວ ພ້ອມກັນຈັດຕັ້ງເຜີຍແຜ່ແຈ້ງການສະບັບນີ້ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນເອງ ຮັບຊາບ ແລະ ພ້ອມກັນເປັນເຈົ້າການຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ;
5. ພະແນກການເງິນແຂວງ-ນະຄອນຫຼວງ, ຂະແໜງລາຍຮັບ, ຄັງເງິນປະຈຳແຂວງ-ນະຄອນຫຼວງ, ຄັງເງິນປະຈຳເມືອງ-ນະຄອນ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງເຜີຍແຜ່ແຈ້ງການສະບັບນີ້ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ ແລະ ມີຜົນສຳເລັດ.
6. ແຈ້ງການສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ .

ຫົວໜ້າຫ້ອງການກະຊວງ

ສົມບູນ ອິນທະປັດຖາ